ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງສຶກສາທິການ

ເລກທີ 1779 /ສສ.[redacted] 05

ນະຄອນຫຼວງວຽງຈັນ, ວັນທີ 08 SEP 2005

# ຂໍ້ຕົກລົງ

## ຂອງ ລັດຖະມົນຕີວ່າການກະຊວງສຶກສາທິການ ວ່າດ້ວຍລະບຽບການ ທຽບໃບປະກາສະນີຍະບັດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ສະບັບເລກທີ 167/ນຍ, ລົງວັນທີ 09 / 09 /1999.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍລະບຽບລັດຖະກອນ ສປປ ລາວ ສະບັບເລກທີ 82 / ນຍ, ລົງວັນທີ 19 / 05 / 03.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄົ້ນຄວ້າລະບຽບການທຽບໃບປະກາສະນີຍະບັດ ສະບັບເລກທີ 104 / ນຍ, ລົງວັນທີ 15 / 07 / 2004.
- ອີງຕາມ ການຄົ້ນຄວ້າ ນຳສະເໜີ ຂອງ ຄະນະກຳມະການຄົ້ນຄວ້າລະບຽບການທຽບໃບປະກາສະນີຍະບັດ ແລະ ອີງຕາມແຈ້ງການ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1102/ຫສນຍ.ກລຂ, ລົງວັນທີ 19 / 07 / 2005.

## ລັດຖະມົນຕີວ່າການກະຊວງສຶກສາທິການ ຕົກລົງ :

ມາດຕາ 1: ວຸດທິການສຶກສາ ວິຊາສະເພາະ ລະດັບຕ່າງໆ ຢູ່ ສ.ປ.ປ ລາວ ໄດ້ກຳນົດຕາມລະດັບການສຶກສາ ດັ່ງນີ້:

1.1. ລະດັບການສຶກສາ ຊັ້ນສູງ ແລະ ມະຫາວິທະຍາໄລ ລວມມີ :

- ປະລິນຍາເອກ ຫຼື ທຽບເທົ່າ.
- ເໜືອປະລິນຍາໂທ(ລົງເລິກຂະແໜງການ).
- ປະລິນຍາໂທ ຫຼື ທຽບເທົ່າ
- ເໜືອປະລິນຍາຕີ (ລົງເລິກຂະແໜງການ).
- ປະລິນຍາຕີ ຫຼື ທຽບເທົ່າ.
- ປະກາສະນີຍະບັດຊັ້ນສູງ ຫຼື ທຽບເທົ່າ.

1.2. ລະດັບ ອາຊີວະສຶກສາ ແລະ ເຝິກອົບຮົມວິຊາຊີບ ລວມມີ:

- ອາຊີວະສຶກສາຊັ້ນກາງ (ປະກາສະນີຍະບັດ ຊັ້ນກາງ).
- ອາຊີວະສຶກສາຊັ້ນຕົ້ນ (ປະກາສະນີຍະບັດ ຊັ້ນຕົ້ນ).
- ເຝິກອົບຮົມວິຊາຊີບໄລຍະສັ້ນ (ໃບຢັ້ງຢືນ).

ມາດຕາ 2: ການປຽບທຽບ ໃບປະກາສະນີຍະບັດ ແລະ ວຸດທິການສຶກສາ ຂອງຜູ້ທີ່ຮຽນຈົບ ການສຶກສາ ຈາກ ສະຖາບັນການສຶກສາ ຢູ່ ພາຍໃນ ແລະ ຕ່າງປະເທດ ໃນລະດັບຕ່າງໆ ທີ່ຜ່ານມາ ແລະ ໃນຕໍ່ໜ້າ ໃຫ້ປະຕິບັດຕາມ " ຕາຕະລາງທຽບໃບປະກາສະນີຍະບັດໃຫ້ນັກສຶກສາທີ່ຮຽນຈົບມາຈາກພາຍໃນ ແລະ ຕ່າງປະເທດ ແລະ ທຽບໃສ່ຊັ້ນ-ຂັ້ນເງິນເດືອນ " ສະບັບເລກທີ 655/ສສ.ອສ.05 ລົງວັນທີ 06/09/05.

2.1 ອີງຕາມ ຊື່ໃບປະກາສະນີຍະບັດ ທີ່ສະຖາບັນການສຶກສາ ທີ່ກ່ຽວຂ້ອງນັ້ນຢັ້ງຢືນ, ເພື່ອຈັດເຂົ້າຕາມຊັ້ນ ທີ່ກຳນົດ ຢູ່ ມາດຕາ 1, ຂໍ້ 1.1 ຫຼື ຂໍ້ 1.2.

2.2 ອີງຕາມ ຫຼັກສູດ ແລະ ໄລຍະເວລາຂອງການຮຽນ, ເນື້ອໃນຫຼັກສູດທີ່ສະຖາບັນການສຶກສານັ້ນ ກຳນົດ ເພື່ອຈັດເຂົ້າຕາມຊັ້ນ ທີ່ກຳນົດ ໃນມາດຕາ 1, ຂໍ້ 1.1 ຫຼື ຂໍ້ 1.2.

2.3 ໃນກໍລະນີ ຜູ້ທີ່ຮຽນຈົບການສຶກສາ ລະດັບໃດໜຶ່ງ ຫາກບໍ່ມີໃບປະກາສະນີຍະບັດ ຕາມຂໍ້ 2.1 ຫຼື ບໍ່ມີເອກກະສານ ຕາມ ຂໍ້ 2.2 ຂອງ ມາດຕາ 2 ນີ້, ການທຽບວຸດທິການສຶກສາ ຈະໄດ້ ອີງຕາມຕາຕະລາງທຽບຊັ້ນ ທີ່ໄດ້ຖືກຮັບຮອງ ໂດຍ ຄະນະກຳມະການ ຄົ້ນຄວ້າລະບຽບ ກ່ຽວກັບການທຽບໃບປະກາສະນີຍະບັດ ສະບັບເລກທີ 655/ສສ.ອສ.05 ລົງວັນທີ 06/09/05.

2.4 ກໍລະນີຜູ້ທີ່ຈົບການສຶກສາ ສູງກວ່າ ປະລິນຍາເອກ ທົ່ວໄປ (ສູງກວ່າ Ph.D), ຄະນະກຳມະການຄົ້ນຄວ້າ ການທຽບໃບປະກາສະນີຍະບັດ ຈະໄດ້ຄົ້ນຄວ້າທຽບຊັ້ນ ຕາມວຸດທິການສຶກສາ ຂອງຜູ້ກ່ຽວ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາ ຕາມຄວາມເໝາະສົມ.

ມາດຕາ3: ມອບໃຫ້ກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ, ກະຊວງສຶກສາທິການຮັບຜິດຊອບໜ້າທີ່ເຮັດໃບນຳສົ່ງ ຫຼື ໃບຢັ້ງຢືນ ທຽບໃບປະກາສະນີຍະບັດ ໃຫ້ນັກຄົ້ນຄວ້າ ແລະ ນັກສຶກສາ ທີ່ຮຽນຈົບການສຶກສາ ລະດັບຕ່າງໆ ຈາກພາຍໃນ ແລະ ຕ່າງປະເທດ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການທຽບວຸດທິການສຶກສາ ສຳລັບຜູ້ຈົບການສຶກສາ ວິຊາສະເພາະຈາກພາຍໃນ ແລະ ຕ່າງປະເທດ ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ຜູ້ວ່າການລັດຖະມົນຕີກະຊວງສຶກສາທິການ,

ກະຊວງສຶກສາທິການ

ສຈ.ດຣ.ບໍ່ແສງຄຳ ວົງດາລາ